ໂຄງການກະສິກຳ ເພື່ອໂພຊະນາການ

ຂັ້ນຕອນການລ້ຽງໝູລາດແບບຂັງ ສຳລັບຄອບຄົວຊາວກະສິກອນ

21



1 ກະກຽມຄອກໝູ

ການປຸກສ້າງຄອກມີ 2 ແບບ:
1) ຄອກໝູແບບຊຸພື້ນ
2) ຄອກໝູແບບຍົກພື້ນ
ສາມາດເຮັດໄດ້ໃນຮູບລັກສະນະແບບໝາແຫງນກາຍທຳມະດາ, ແບບໝາແຫງນກາຍ ແລະ ແບບໜ້າຈົ່ວທຳມະດາ. ຄອກແບບຍົກພື້ນໄດ້ໃຊ້ວັດຖຸດິບຫຼາຍໃນການກໍ່ສ້າງ ຊຶ່ງຕ້ອຄອກາທາງຂ້າງ ດ້ານລວງຍາວ ແລະ ລວງກວ້າງອາດຈະເຮັດດ້ວຍໄມ້ກົມລຽນລຳ, ສ່ວນພື້ນອາດຈະເຮັດດ້ວຍໄມ້ປີກ, ໄມ້ແປ້ນ; ຫຼັງຄາສາມາດມຸງດ້ວຍຫຍ້າ, ສັງກະສີ ຫຼື ກະເບື້ອງກໍ່ໄດ້; ຕ້ອງໄດ້ຍົກແຕ່ພື້ນດິນຂຶ້ນຫາພື້ນຄອກ 40 ຊັງຕີແມັດ, ຝາຄອກ (ນັບແຕ່ພື້ນຄອກຂຶ້ນ) 1 ແມັດ, ນັບແຕ່ຝາສຸດເບື້ອງເທິງ ຂຶ້ນຫາຫຼັງຄາ (ຂີ່) 1 ແມັດ ແລະ ເສົາດັ້ງ 20 ຊັງຕີແມັດ. ຄອກໝູແບບຍົກພື້ນ ເໝາະສົມກັບເຂດທີ່ເປັນພື້ນທີ່ຕ່ຳ ແລະ ເຂດທີ່ມັກມີນ້ຳຖ້ວມໃນລະດູຝົນ.

ຄອກໝູແບບຊຸພື້ນ

ຄອກໝູແບບຍົກພື້ນ

2 ແມ່ພັນໝູລາດ

ແມ່ພັນໝູລາດ: ຕົ້ນໂຕສີດຳ, ໜ້າຜາກມີສີຂາວ ແລະ ມີນ້ຳໜັກ ລະຫວ່າງ 80 ຫາ 100 ກິໂລ.

ແມ່ພັນໝູມໍ້ງ: ມີສີດຳ ແລະ ຮູບຮ່າງໃຫຍ່ ມີນ້ຳໜັກເຕັມທີ່ ປະມານ 80 ຫາ 120 ກິໂລ.

ແມ່ພັນໝູຈີດ: ມີສີດຳ, ຮູບຮ່າງນ້ອຍ ມີນ້ຳໜັກ ປະມານ 40-60 ກິໂລ.

ແມ່ພັນໝູມແດງ: ມີສີແດງ, ໜ້າຜາກສັ້ນ, ຮູບຮ່າງ ໃຫຍ່ ແລະ ມີນ້ຳໜັກ ປະມານ 65-90 ກິໂລ.

3 ການລ້ຽງໝູໃນຄອກ

ແມ່ນໄລຍະເວລາແຕ່ ອາຍຸໄດ້ 8 ຫາ 10 ອາທິດ ນັບແຕ່ມື້ເກີດ, ມີນ້ຳໜັກແຕ່ 15 ຫາ 20 ກິໂລຂຶ້ນໄປຈົນຮອດນ້ຳໜັກ 80 ກິໂລຂຶ້ນ ຫຼື ຫຼາຍກວ່ານັ້ນ ຊຶ່ງຈະໃຊ້ເວລາລ້ຽງແຕ່ 13 ຫາ 16 ອາທິດ ຫຼື ປະມານ 90 ວັນ ແລ້ວ ແຕ່ຈຸດປະສົງຂອງຜູ້ລ້ຽງຄື: ລ້ຽງເປັນໝູຊື້ນສົ່ງຕະຫຼາດ ຫຼື ຈະລ້ຽງ ເພື່ອຄັດເລືອກແມ່ພັນ; ສຳລັບຄອກໝູລຸ້ນກໍ່ສາມາດນຳໃຊ້ຄອກແບບຊຸພື້ນ ຫຼື ຄອກແບບຍົກພື້ນ ຕາມເງື່ອນໄຂທຳມະຊາດຂອງແຕ່ລະເຂດໃຫ້ເໝາະສົມ.

ຄວາມຕ້ອງການເນື້ອທີ່ ຖ້າແມ່ນຄອກແບບຊຸພື້ນປະມານ 1 ຕາແມັດຕໍ່ໂຕ, ສາມາດຈັດເປັນກຸ່ມ 5 ຫາ 10 ໂຕຕໍ່ຄອກ, ແຕ່ຕ້ອງໃຫ້ມີຮາງ ໃຫ້ອາຫານຄົບຖ້ວນ, ກວ້າງພໍດີກັບຂະໜາດຂອງໝູ ເພື່ອບໍ່ໃຫ້ໝູຍາດຊີ້ງອາຫານກັນ; ຖ້າເປັນຄອກຍົກພື້ນຕ້ອງມີພື້ນທີ່ປະມານ 0,7 ຕາແມັດຕໍ່ໂຕ; ຕ້ອງໃຫ້ໝູລຸ້ນໄດ້ກິນນ້ຳ ຕາມຄວາມຕ້ອງການຕະຫຼອດ 24 ຊົ່ວໂມງ.

4 ອາຫານໝູ ແລະ ເຕັກນິກການໃຫ້ອາຫານ

4.1 ການຄິດໄລ່ອາຫານໝູ

- ໝູນ້ອຍດູດນົມ ໃຊ້ເວລາລ້ຽງ 1 ເດືອນ ຕ້ອງການອາຫານ 1,3 ກິໂລຖາມ/ໂຕ/ວັນ.
- ໝູນ້ອຍຢ່ານົມ ຫຼື ໝູນ້ອຍອະນຸບານ ໃຊ້ເວລາລ້ຽງ 6 ອາທິດ ຕ້ອງການອາຫານ 26 ກິໂລຖາມ/ໂຕ/6 ອາທິດ.
- ໝູຊຶ້ນມີອັດຕາແລກປ່ຽນທາດອາຫານ 1:3 ໃຊ້ເວລາລ້ຽງ 13 ອາທິດ. ຕ້ອງການອາຫານ 240 ກິໂລຖາມ.
- ແມ່ພັນ 1 ໂຕຕ້ອງການອາຫານປະມານ 800 ກິໂລຖາມລ້ຽງໃນ 1 ປີ.
- ພໍ່ພັນ 1 ໂຕ ຕ້ອງການອາຫານປະມານ 900 ກິໂລຖາມ ລ້ຽງໃນ 1 ປີ.

4.2 ອາຫານໝູທີ່ມີຢູ່ໃນທ້ອງຖິ່ນ

ໂດຍທົ່ວໄປ ອາຫານໝູທີ່ຫາໄດ້ໃນທ້ອງຖິ່ນຕ່າງໆຂອງລາວເຮົາຕົ້ນຕໍແມ່ນ: ຮຳ, ສາລີ, ເຂົ້າປຽນ, ມັນຕົ້ນ ແລະ ພືດຜັກຕ່າງໆເຊັ່ນ: ໃບປ໋ສາ, ບອນ, ຍອກ້ວຍ, ຫຍ້າເຮືອບິນ, ຜັກຫົມ. ສຳລັບຖົ່ວສະໄຕໂລ ແມ່ນຊາວກະສິກອນຈຳນວນໜຶ່ງ ກຳລັງລິເລີ່ມນຳໃຊ້ອາຫານ ຕ່າງໆ ເຫຼົ່ານີ້ ແມ່ນສາມາດຕອບສະໜອງ ທາງດ້ານພະລັງງານຢ່າງພຽງພໍໃຫ້ໝູ, ແຕ່ຈະຂາດທາດຊຶ້ນ, ແຮ່ທາດ ແລະ ວິຕະມິນ.

<u>ຕົວຢ່າງ</u>: ສູດອາຫານທີ່ຈະນຳໄປປັບປຸງດ້ານອາຫານໝູ ຂອງຊາວກະສິກອນເຂດພູດອຍ ບ້ານເປົ້າໝາຍຂອງໂຄງການ

<u>ວັດຖຸດິບ:</u>

- ຮຳອ່ອນໂຮງສີຂະໜາດກາງ, ນ້ອຍ ມີທາດຊຶ້ນປະມານ 10%
- ສາລີ 9%
- ອາຫານເຂັ້ມຂຸ້ນ 29%
- ຖົ່ວສະໄຕໂລ 14%
- ຍອກ້ວຍ 4%

ຕາຕະລາງ: ທາດອາຫານຂອງວັດຖຸດິບອາຫານສັດ

ລ/ດ	ວັດຖຸດິບອາຫານສັດ	ທາດຊຶ້ນ, %	ອັດຕາສ່ວນປະສົມສູດທີ 1 (kg)	
			ກິໂລ	ທາດຊຶ້ນທີ່ໄດ້ຮັບ
1	ຮຳອ່ອນ (ໂຮງສີກາງ,ນ້ອຍ)	10	30	3
2	ສາລີ	9	15	1.35
3	ມັນຕົ້ນ	2.5	9	0.27
4	ອາຫານເຂັ້ມຂຸ້ນ	29	26	7.54
5	ຍອກ້ວຍ	4	8	0.32
6	ຖົ່ວສະໄຕໂລ	14	12	1.68
	ລວມ		100	14.16

5 ການປ້ອງກັນ ແລະ ປິ່ນປົວສຸຂະພາບໝູ

ພະຍາດໝູມີຫລາຍຊະນິດ, ໝູຫູກ່ຳ, ອະຫິວາ ແລະ ອື່ນໆ ເຊິ່ງລາຍລະອຽດ ເປັນລັກສະນະ ວິຊາການ ເກີນໄປ, ສະນັ້ນ ຈຶ່ງບໍ່ສາມາດລົງລາຍລະອຽດໄດ້ ແຕ່ຈະສະເໜີ ບັນດາສາເຫດທີ່ພາໃຫ້ໝູເກີດພະຍາດ ແລະ ວິທີປ້ອງກັນ, ສ່ວນວ່າການແກ້ໄຂ ຫລື ການປິ່ນປົວ ຄວນສະເໜີ ສັດຕະວະແພດ ສະເພາະດ້ານ ມາປິ່ນປົວ ໃຫ້ທັນເວລາຈະເປັນການດີ.

ການປ້ອງກັນພະຍາດໝູ:

- ໃຫ້ເຮັດຮົ້ວອ້ອມຄອກ ຫຼື ຟາມໝູ ເພື່ອປ້ອງກັນບໍ່ໃຫ້ສັດປະເພດອື່ນເຂົ້າລົບກວນ;
- ຖ້າມີເງື່ອນໄຂໃຫ້ປູກຕົ້ນໄມ້ ເພື່ອເປັນສິ່ງກຳບັງພະຍາດສັດ;
- ໃຫ້ເຮັດຄອກໝູຫ່າງຈາກເຮືອນ ຢ່າງໜ້ອຍ 50 ແມັດ;
- ທຳຄວາມສະອາດຄອກໝູທຸກໆວັນ, ອະນາໄມຂີ້ໝູອອກຈາກຄອກ, ລ້າງພື້ນຄອກ, ຮາງອາຫານເປັນປົກກະຕິ;
- ໃຫ້ໝູໄດ້ກິນນ້ຳທີ່ສະອາດບໍ່ມີການປົນເປື້ອນສານເຄມີຕ່າງໆ ຕ້ອງເກືອໝູດ້ວຍອາຫານສົດຍັງໃໝ່, ບໍ່ມີເຊື້ອລາ, ບໍ່ມີກິ່ນເໝັນ;
- ທຳຄວາມສະອາດອຸປະກອນທີ່ຮັບໃຊ້ປະຈຳຄອກໝູເປັນປະຈຳເຊັ່ນ: ອຸປະກອນເກືອໝູ, ຄຸໃສ່ນ້ຳ, ເຄື່ອງຕັກອາຫານ, ຊວ້ານ ແລະ ອື່ນໆ.
- ບໍ່ໃຫ້ເອົາຊີ້ນໝູທີ່ຕາຍດ້ວຍພະຍາດ ມາຄ໊ວກິນຢູ່ໃກ້ກັບຄອກໝູ ຫຼື ຢູ່ໃນຟາມຂອງຕົນ.

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ້: www.afn.gov.la